ຄະນະທີ່ປຶກສາດ້ານການຄຸ້ມຄອງ
ການປະມົງ (TAB) ໃນອ່າງແມ່ນ້ຳຂອງ

# ວິທີການດຳລົງຊີວິດ ແລະ ການຄຸ້ມຄອງ ການປະມົງ ຢູ່ອ່າງແມ່ນ້ຳຂອງຕອນລຸ່ມ

*ບົດສະເໜີແນະໃນການຄຸ້ມຄອງການປະມົງ No.5*

*ກໍລະກົດ 2006*



ເພື່ອການຄຸ້ມຄອງການປະມົງໃນອ່າງແມ່ນ້ຳຂອງຢ່າງມີປະສິດທິຜົນ ແລະ ຍືນຍົງ.

## ຄວາມເປັນມາ

ໃນປະຈຸບັນການລຸດຜ່ອນຄວາມທຸກຍາກ ໄດ້ກາຍເປັນເປົ້າໝາຍລັກຂອງບັນດາປະເທດທີ່ອາໄສຢູ່ແມ່ນ້ຳ ຂອງຕອນລຸ່ມ, ໄປພ້ອມໆກັນນັ້ນບົດບາດຂອງຂະແໜງການປະມົງກໍ່ມີການປ່ຽນແປງເຊັ່ນກັນ. ແຕ່ກ່ອນວຽກງານປະມົງແມ່ນໄດ້ສຸມໃສ່ການຄຸ້ມຄອງ ແລະ ການເພີ່ມຜົນຜະລິດປາ.ແຕ່ໃນປະຈຸບັນແມ່ນໄດ້ປະກອບສ່ວນເຂົ້າໃນການຍົກສູງຊີວິດການເປັນຢູ່ຂອງປະຊາຊົນເຂດຊົນນະບົດ. ຊຶ່ງລວມທັງການຊ່ວຍຊຸມຊົນໃຫ້ມີບົດບາດໃນການມີສ່ວນຮ່ວມການວາງແຜນຍຸດທະສາດ, ການຈັດຕັ້ງປະຕິບັດວຽກງານຄຸ້ມຄອງ ແລະ ພັດທະນາການປະມົງ.

ຄຳສັບ ກ່ຽວກັບການດຳລົງຊີວິດ 'Livelihoods'

Asset = ສິ່ງທີ່ມີປະໂຫຍດ ຫລື ມີລາຄາ.

Holistic = ສຶກສາຢ່າງຄົບຊຸດ ບໍ່ແມ່ນສຶກສາແຕ່ບາງສ່ວນ

Institution = ນະໂຍບາຍ, ລະບຽບການຕ່າງໆ, ແຜນການ, ອົງການຈັດຕັ້ງຕ່າງໆ ທີ່ສົ່ງເສີມວຽກງານດັ່ງກ່າວ. ການຕະຫລາດ ກໍແມ່ນນຶ່ງໃນຄວາມໝາຍຂອງຄຳສັບນີ້.

Living = ມີລາຍຮັບພຽງພໍເພື່ອດຳລົງຊີວິດ ຫລື ການສ້າງລາຍຮັບ

Livelihood = ຮັບປະກັນໃຫ້ມີສິ່ງຈຳເປັນພື້ນຖານເພື່ອການຢູ່ລອດ

Livelihood = ເສດຖະກິດ ແລະ ສັງຄົມທີ່ສ້າງໃຫ້ມີລາຍຮັບ ແລະ ໜ້າວຽກ ແລະ ມີຜົນສະທ້ອນຈາກສະພາບພາຍນອກ ທີ່ຄອບຄຸມກຸ່ມຄົນ ຫລື ຄອບຄົວ..

Lifestyle = ການດຳລົງຊີວິດຂອງຄົນ

Standard of living = ລະດັບຂອງຄວາມຕ້ອງ ການເພື່ອດຳລົງຊີວິດ ຫລື ຄວາມຮັ່ງມີ ຂອງຊຸມຊົນ, ຊັ້ນຄົນ, ບຸກຄົນ

Vulnerability = ຄວາມສ່ຽງທີ່ອາດຈະເກີດຂຶ້ນ, ການຈັດການກັບບັນຫາ, ການຟື້ນຕົວຈາກຜົນກະທົບພາຍນອກ ທີ່ມີຕໍ່ການດຳລົງຊີວິດຂອງຄົນ

Vulnerability context = ເຫດຜົນ, ສະພາບການ ຫລື ເງື່ອນໄຂພາຍນອກຕ່າງໆ ທີ່ກໍ່ໃຫ້ເກີດອຸປະສັກ ຫລື ເຮັດໃຫ້ມີການເພີ່ມຂໍ້ຫຍຸ້ງຍາກ ໃຫ້ຫລາຍຂຶ້ນ.

ການເພີ່ມບົດບາດໃໝ່ໃນຂະແໜງການປະມົງແມ່ນ ຮຽກຮ້ອງໃຫ້ຜູ້ບໍລິຫານການປະມົງຢູ່ໃນທຸກລະດັບ, ນັບຕັ້ງແຕ່ຂັ້ນທ້ອງຖິ່ນຈົນຮອດຂັ້ນສູນກາງ ຕ້ອງໄດ້ເສີມຂະຫຍາຍຄວາມສຳຄັນ ຂອງວຽກງານປະມົງລວມທັງການຫາປາ ແລະ ວຽກງານຕ່າງໆທີ່ກ່ຽວຂ້ອງກັບການປະມົງໃຫ້ ທົ່ວປວງຊົນຮັບຮູ້. ຊຶ່ງມີຄວາມຈຳເປັນຕ້ອງໄດ້ສຶກສາລະອຽດກ່ຽວກັບ ການປະກອບສ່ວນ ຂອງວຽກງານປະມົງຕໍ່ກັບຊີວິດການເປັນຢູ່ຂອງຊຸມຊົນ ໃນຊົນນະບົດ ແລະ ເບິ່ງຄືນວ່າຊຸມຊົນດັ່ງກ່າວມີຄວາມສົນໃຈສໍ່າໃດຕໍ່ ວຽກງານການປະມົງ ແລະ ວຽກອື່ນໆທີ່ກ່ຽວຂ້ອງກັບຊັບພະຍາກອນແຫລ່ງນ້ຳ, ບັນຫາຂອງເຂົາເຈົ້າ ແລະ ຜົນສະທ້ອນຂອງກຸ່ມຄົນຕ່າງຖິ່ນທີ່ມີຕໍ່ການດຳລົງຊີວິດ, ວັດທະນະທຳ ແລະ ສັງຄົມຂອງຊຸມຊົນ.

ການຮຽນຮູ້ກ່ຽວກັບວິທີດຳລົງຊີວິດແມ່ນ ວິທີໃໝ່ທີ່ຈະຊ່ວຍໃຫ້ຍົກສູງວຽກງານ ການຄຸ້ມຄອງການປະມົງ ໃຫ້ເປັນທີ່ຮູ້ຈັກກັນໂດຍສະເພາະ ກັບອົງການພັດທະນາ ແລະ ກັບພາກສ່ວນອື່ນໆອີກ. ແຕ່ວ່າຄວາມເຂົ້າໃຈທິດສະດີກ່ຽວກັບວິທີການດຳລົງຊີວິດ ຫລື ການດຳລົງຊີວິດຂອງຊຸມຊົນ

ຂອງພະນັກງານຂັ້ນສູງທີ່ມີໜ້າທີ່ຕັດສິນບັນຫາກ່ຽວກັບການປະມົງແມ່ນຍັງມີໜ້ອຍ ແລະ ບໍ່ໄດ້ຖືກນຳໃຊ້. ຍ້ອນເຫດຜົນດັ່ງກ່າວ ຄະນະທີ່ປຶກສາດ້ານ ການປະມົງ (TAB) ໄດ້ມອບໃຫ້ ອົງການ STREAM Initiative[1] ທົບທວນຄືນວຽກງານຄົ້ນຄວ້າຜ່ານມາ ກ່ຽວກັບການນຳໃຊ້ຫລັກ ການກ່ຽວກັບດຳລົງຊີວິດຂອງຊຸມຊົນ ເພື່ອປະເມີນວຽກງານການປະມົງ ແລະ ຊຸມຊົນປະມົງຢູ່ໃນອ່າງແມ່ນ້ຳຂອງຕອນລຸ່ມ. ຂໍ້ມູນດັ່ງກ່າວ ແມ່ນຈະສະແດງໃຫ້ເຫັນເຖິງລັກສະນະພິເສດການໄດ້ຮັບຜົນປະໂຫຍດ ແລະ ການດຳລົງຊີວິດຕົວຈິງທີ່ກ່ຽວພັນກັບວຽກງານການຄຸ້ມຄອງ ແລະ ພັດທະນາການປະມົງ. ອົງການ STREAM ຍັງໄດ້ໃຫ້ຄຳສະເໜີແນະຫລາຍຫົວຂໍ້ທີ່ຈະຊ່ວຍນຳໃຊ້ເຂົ້າໃນການສຶກສາວິທີການ ດຳລົງຊີວິດໃນອານາຄົດ. ບົດສະເໜີແນະວິທີການຄຸ້ມຄອງການ ປະມົງສະບັບນີ້ແມ່ນຈະໄດ້ສະເໜີຜົນຂອງ ການຄົ້ນຄວ້າດັ່ງກ່າວ[2].




## ການດຳລົງຊີວິດແມ່ນຫຍັງ?

ຄຳສັບຕົ້ນສະບັບຂອງ livelihood ແມ່ນໝາຍເຖິງຫນ້າວຽກ (occupation) ຫລື ການເຮັດວຽກ (employment) ເພື່ອການຢູ່ລອດຂອງຊີວິດ. ແຕ່ໃນປະຈຸບັນນີ້ຄວາມໝາຍດັ່ງກ່າວໄດ້ອະທິບາຍກວ້າງອອກໄປຕື່ມຊຶ່ງກວມເອົາລະບົບທີ່ລວບລວມເອົາບັນຫາສັງຄົມ, ເສດຖະກິດ ແລະ ພາກສ່ວນ ອື່ນໆເຂົ້ານຳ. ຢູ່ໃນລະບົບການດຳລົງຊີວິດ (livelihood systems) ແມ່ນມີຫລາຍເງື່ອນໄຂທີ່ສົ່ງ ຜົນສະທ້ອນຕໍ່ຄວາມເຂັ້ມແຂງ, ຄວາມຄົງຕົວ, ຂໍ້ຄົງຄ້າງຂອງການດຳລົງຊີວິດຂອງຊຸມຊົນ. ສິ່ງດັ່ງກ່າວ ອາດແມ່ນການຖືຄອງສິດ, ການເຮັດວຽກ ແລະ ວຽກງານວັດທະນະທຳຕ່າງໆ, ແລະ ເງື່ອນໄຂ ທີ່ເຮັດໃຫ້ຊຸມຊົນເຂົ້າເຖິງ ຫລື ຢຸດເຊົາກິດຈະກຳທີ່ເຂົາເຈົ້າມີສິດ ຄອບຄອງ

ແລະ ໜ້າວຽກຕ່າງໆ. ເງື່ອນໄຂພາຍນອກ, ຍົກຕົວຢ່າງ ການເມືອງ, ການປົກຄອງ ກໍ່ມີຜົນກະທົບຕໍ່ການດຳລົງຊີວິດຂອງ ຊຸມຊົນເຊັ່ນກັນ[3].

## ຫລັກການດຳລົງຊີວິດ ແບບຍືນຍົງ

ຫລັກການດຳລົງຊີວິດ ແບບຍືນຍົງ ການດຳລົງຊີວິດຂອງຊຸມ ຊົນຈະມີຄວາມ ຍືນຍົງໃນເວລາທີ່ເຂົາເຈົ້າສາມາດຮັກສາ ແລະ ປ້ອງກັນສິດຂອງເຂົາເຈົ້າ ແລະ ສາມາດ ສູ້ຍັນ ກັບປະກົດການຫຍໍ້ທໍ້ພາຍໃນ ແລະ ພາຍນອກຊຸມຊົນ, ບໍ່ມີການຫາເກີນຂອບເຂດ ຫລື ທຳລາຍສະພາບແວດລ້ອມ ທີ່ເຂົາເຈົ້າຕ້ອງເພິ່ງພາ. ຢູ່ໃນສະພາບດັ່ງກ່າວ ຄວາມຍືນຍົງແມ່ນບໍ່ຢູ່ຄົງຕົວ ຫລື ສົມດູນ, ແຕ່ຕ້ອງການໃຫ້ມີເງື່ອນໄຂທີ່ປັບຕົວໃຫ້ຢູ່ຄົງທີ່ ແລະ ສາມາດປ່ຽນແປງໄດ້ຕາມການເວລາ.

ຫລັກການດຳລົງຊີວິດແບບຍືນຍົງ ແມ່ນເຄື່ອງມືນຶ່ງທີ່ເຮັດໃຫ້ການເຂົ້າໃຈເຖິງການດຳລົງຊີວິດກ້ວາງອອກຕື່ມເພື່ອ:

- ຄົ້ນຄວ້າໂດຍກົງກ່ຽວກັບບັນຫາຄວາມທຸກຈົນເພື່ອນຳເອົາຄວາມຈິງຂອງການດຳລົງຊີວິດຂອງຊຸມຊົນໃນຊົນນະບົດຊຶ່ງສ່ວນຫລາຍແມ່ນອາໄສແຫລ່ງຊັບພະຍາກອນນ້ຳ ແລະ ໜ້າວຽກຕ່າງໆທີ່ກ່ຽວພັນກັບນ້ຳເປັນແຫລ່ງຫາກິນ.

- ປັບປຸງແຜນການ ແລະ ການຈັດຕັ້ງປະຕິບັດໂດຍການນຳສະເໜີຈຸດດີເດັ່ນ, ຂໍ້ຄົງຄ້າງ ແລະ ທ່າແຮງຂອງວຽກງານພັດທະນາຊັບພະຍາກອນສັດນ້ຳ.

- ທົບທວນຄືນການນຳສະເໜີຍຸດທະສາດຂອງການພັດທະນາ ແລະ ຄຸ້ມຄອງການປະມົງ, ແລະ ນຳສະເໜີຂໍ້ຄິດເຫັນ ເພື່ອກຳນົດຍຸດທະສາດໃນຕໍ່ໜ້າ ໂດຍຜ່ານການສະເໜີຜົນຂອງການທົບທວນວິທີການດຳລົງຊີວິດຂອງຊຸມຊົນໃນຊົນນະບົດ.

## ລັກສະນະພິເສດຂອງຫລັກການການດຳລົງຊີວິດ

- ແມ່ນອີງໃສ່ຊຸມຊົນ ບໍ່ແມ່ນອີງໃສ່ຊັບພະຍາກອນທຳມະຊາດ

- ຖືກສ້າງຂື້ນຈາກຄວາມເຂັ້ມແຂງຂອງຊຸມຊົນບໍ່ແມ່ນຈາກຄວາມອ່ອນແອ

- ຖືກສ້າງຂື້ນຢູ່ໃນບັນດາກຸ່ມຄົນທີ່ຫາລ້ຽງຊີບ ແລະ ມີລາຍຮັບທີ່ແຕກຕ່າງກັນ.

- ຫລັກການຂອງເຂົາເຈົ້າແມ່ນມີຫລັກສະນະເປັນວົງຈອນ/ມີການຕອບຮັບ ຫລາຍກວ່າ ເປັນເສັ້ນຊື່

- ມີການພົວພັນກັບຫລາຍພາກສ່ວນ, ມີການປັບຕົວໄປຕາມປະຫວັດສາດ, ລວມທັງ ເງື່ອນໄຂສະພາບແວດລ້ອມ, ເສດຖະກິດ ແລະ ວັດທະນະທຳ.

- ເນັ້ນໃສ່ຜົນກະທົບທີ່ແຕກຕ່າງທາງດ້ານການພັດທະນາຂອງກຸ່ມຄົນທີ່ແຕກຕ່າງກັນ.
- ເຖິງວ່າ ຈະເນັ້ນໃສ່ລະດັບຄອບຄົວແຕ່ໃນລະດັບພື້ນຖານ ຫາການນຳ (ຄອບຄົວເຖິງ ຂັ້ນວາງນະໂຍບາຍ) ກໍ່ໄດ້ຮັບການເອົາໃຈໃສ່ເຊັ່ນກັນ.
- ເປັນອົງການຈັດຕັ້ງທີ່ປະກອບມີຫລາຍພາກສ່ວນ (ເອກະຊົນ, ໃນເມືອງ, ຄົນທ້ອງຖິ່ນ, ລະດັບປະເທດ, ທົ່ວໂລກ)
- ມີການປ່ຽນແປງປັບຕົວໃຫ້ເຂົ້າກັບສະພາບ, ປ່ອຍໃຫ້ມີການປ່ຽນແປງຕາມເງື່ອນໄຂທີ່ ແຕກຕ່າງກັນ.

## ຜົນປະໂຫຍດທີ່ໄດ້ຮັບຈາກ ຫລັກການດຳລົງຊີວິດ

- ຫລັກການການດຳລົງຊີວິດແມ່ນສະໜອງຄວາມເຂົ້າໃຈແຈ້ງ, ສັງລວມເອົາຫລາຍຄວາມເຫັນຈາກຊຸມຊົນທີ່ມີຄວາມສົນໃຈຕໍ່ວຽກງານການປະມົງ.
- ຫລັກການການດຳລົງຊີວິດແມ່ນຊ່ວຍໃຫ້ພວກເຮົາເຂົ້າໃຈອົງປະກອບທີ່ສັບສົນຂອງຊັບພະຍາກອນນ້ຳ (ປາ, ກຸ້ງ, ຫອຍ, ກົບ, ປູ, ສັດນ້ຳ ແລະ ພືດນ້ຳລວມທັງນາເຂົ້າແຫ່ນທີ່ຈະເປັນຂໍ້ມູນຂອງທຳມະຊາດແບບລວມໆ) ແລະ ສັງລວມເອົາຄວາມສຳຄັນຂອງແຫລ່ງດັ່ງກ່າວ ຕໍ່ກັບການດຳລົງຊີວິດຂອງຊຸມຊົນ.
- ຮັບຮູ້ການຄຸ້ມຄອງຊັບພະຍາກອນສັດນ້ຳທັງໝົດຂອງຊຸມຊົນທຸກຈົນ ແທນທີ່ຈະແມ່ນການຫາປາ ແລະ ລ້ຽງປາ, ຫລັກການດຳລົງຊີວິດແມ່ນຮຽກຮ້ອງໃຫ້ມີການປະສານງານກັນ, ມີຫລາຍພາກສ່ວນ, ຫລາຍໜ້າວຽກ. ຈາກເຫດຜົນດັ່ງກ່າວ, ພວກເຂົາໄດ້ນຳເອົາຈຸດປະສົງຂອງລັດຖະບານ ແລະ ຂອງຊຸມຊົນເພື່ອມາພິຈາລະນາ.
- ຫລັກການການດຳລົງຊີວິດ ແມ່ນຮັບປະກັນໃນການສະໜອງຂໍ້ມູນໃຫ້ແກ່ໂຄງການ ແລະ ນະໂຍບາຍໃນການລຸດຜ່ອນຄວາມທຸກຈົນ ລວມທັງການພົວພັນທີ່ຊັບສົນລະຫວ່າງຊັບພະຍາກອນທຳມະຊາດ ແລະ ສິດໃນການນຳໃຊ້. ນະໂຍບາຍດັ່ງກ່າວ ແມ່ນຈະສາມາດຄວບຄຸມໄດ້ ແລະ ຈະບໍ່ແນະນຳວິທີການຄຸ້ມຄອງຊັບພະຍາກອນທຳມະຊາດ ທີ່ບໍ່ເໝາະສົມໃຫ້ແກ່ການພັດທະນາ ແລະ ດຳລົງຊີວິດປະຈຳວັນຂອງຊຸມຊົນ.
- ຫລັກການການດຳລົງຊີວິດສາມາດຊ່ວຍຜູ້ວາງນະໂຍບາຍ ແລະ ວາງແຜນໃຫ້ເຫັນໄດ້ ແລະ ເຂົ້າໃຈເຖິງຊັບພະຍາກອນທຳມະຊາດ ໃນແງ່ຄວາມຄິດຂອງຊຸມຊົນທີ່ອາໄສແຫລ່ງດັ່ງກ່າວເພື່ອລ້ຽງຊີບ. ສະນັ້ນ: ແຜນການພັດທະນາຕ່າງໆ ແມ່ນຈະຕ້ອງໄດ້ຄຳນຶງເຖິງຄວາມຕ້ອງ ການຂອງຊຸມຊົນ ແລະ ໃຫ້ເຂົາເຈົ້າໄດ້ມີສ່ວນຮ່ວມ ໃນຂະບວນການຕັດສິນບັນຫາ.

## ຫລັກການການດຳລົງຊີວິດໃນພາກປະຕິບັດຕົວຈິງ.

ໄດ້ມີຫລາຍໆ ການຄົ້ນຄວ້າທີ່ນຳໃຊ້ຫລັກການການດຳລົງຊີວິດ. ຢູ່ກຳປູເຈັຍ, Vannaara (2003)[5] ໄດ້ນຳໃຊ້ຫລັກການການດຳລົງຊີວິດເພື່ອສຶກສາຊັບພະຍາກອນສັດນ້ຳຢູ່ຊຸມຊົນ Au Svay ຂອງ ແຂວງຊຽງແຕງ, ພາກເໜືອຂອງກຳປູເຈັຍ. ຈຸດປະສົງຂອງການສຶກສາແມ່ນເພື່ອສະໜອງຂໍ້ມູນເພີ່ມເຕີມ ແລະ ບົດຮຽນຕົວຈິງກ່ຽວກັບການນຳໃຊ້ຊັບພະຍາກອນທຳມະຊາດ ໃຫ້ແກ່ລັດຖະບານ ແລະ ອົງການທີ່ບໍ່ຂຶ້ນກັບລັດຖະບານຊຶ່ງຈະສາມາດນຳໄປຈັດຕັ້ງຢູ່ເຂດອື່ນຕໍ່ໄປ. Marschke (2006)[6] ຄົ້ນຄວ້າເຖິງຫລັກການການດຳລົງຊີວິດທີ່ເຮັດໃຫ້ການປະມົງຢູ່ກຳປູເຈັຍມີການປັບຕົວຢູ່ໄດ້.

ຢູ່ ສປປ ລາວ Shoemaker et al. (2001)[7] ໄດ້ນຳໃຊ້ຫລັກການດັ່ງກ່າວ ເພື່ອທຳຄວາມເຂົ້າໃຈເຖິງລະບົບການພົວພັນລະຫວ່າງຊັບພະຍາກອນທຳມະຊາດ ແລະ ການດຳລົງຊີວິດ ຂອງຊຸມຊົນທີ່ອາໄສຢູ່ແມ່ນ້ຳເຊບັ້ງໄຟ. ພວກເຂົາພົບວ່າ ຈາກສະຖານທີ່ໆແຕກຕ່າງກັນ, ຢູ່ແຕ່ລະລະດູການຊຸມຊົນພື້ນບ້ານແມ່ນຈະນຳໃຊ້ວິທີການທີ່ແຕກຕ່າງກັນ ເພື່ອນຳໃຊ້ຄວາມອຸດົມສົມບູນ ຂອງທຳມະຊາດດ້ວຍຫລາຍຮູບການ ທີ່ຕ່າງກັນ. Mollot *et al* (2003)[8] ນຳໃຊ້ຫລັກການດັ່ງກ່າວ ເພື່ອສຶກສາເບິ່ງການດຳລົງຊີວິດຂອງຊຸມຊົນທີ່ອາໄສຢູ່ເຂດນ້ຳຖ້ວມຕາມລະດູການຢູ່ພາກໃຕ້ຂອງລາວ ທີ່ມີການພົວພັນກັນຢ່າງໃກ້ສິດກັບ ການປົກປັກຮັກສາລະບົບຊີວະນາໆພັນຂອງຊັບພະຍາກອນທຳມະຊາດ ຢູ່ເຂດດັ່ງກ່າວ. ໂດຍການໃຫ້ຊຸມຊົນແລກປ່ຽນບົດຮຽນຕົວຈິງພາຍໃນທ້ອງຖິ່ນ, ຊຶ່ງເຂົາເຈົ້າສາມາດເຂົ້າໃຈແຈ້ງ ເຖິງຄວາມສົມດູນລະຫວ່າງຜົນໄດ້ຮັບ ແລະ ການຄຸກຄາມທີ່ເກີດຈາກນ້ຳຖ້ວມຕາມລະດູການ. ໃນການວິໄຈດັ່ງກ່າວ Mollot ມີຈຸດປະສົງເພື່ອປ້ອງກັນ “ ການປະຕິບັດຕົວຈິງ ຂອງນະໂຍບາຍລຸດຜ່ອນຄວາມທຸກຈົນທີ່ບໍ່ຄົບຊຸດ” ຊຶ່ງໝາຍເຖິງວຽກງານການພັດທະນາແມ່ນບໍ່ໄດ້ລວມເອົາຜົນໄດ້ຮັບທາງບວກ ທີ່ເກີດຈາກນ້ຳຖ້ວມ.

ຢູ່ປະເທດໄທ, ການຄົ້ນຄວ້າຂອງຊາວບ້ານ (Thai Baan Research) ໄດ້ໝູນໃຊ້ຫລັກການການດຳລົງຊີວິດເພື່ອສະແດງໃຫ້ເຫັນເຖິງບັນດາກິດຈະກຳຕ່າງໆຂອງຊຸມຊົນລວມທັງຊາວປະມົງ. ໂຄງການໜອງປາຊຸມຊົນຂອງບ້ານໄດ້ ພັດທະນາແຜນການຄຸ້ມຄອງຊັບພະຍາກອນນ້ຳ ເພື່ອແກ້ໄຂຄວາມທຸກຈົນຂອງປະຊາຊົນເຂດພາກຕາວັນອອກສຽງເໜືອຂອງ ປະເທດໄທ. ຊຶ່ງໄດ້ນຳໃຊ້ຫລັກການຕ່າງໆ ທີ່ກ່ຽວຂ້ອງກັບການດຳລົງຊີວິດຂອງຊຸມຊົນ. ເພື່ອຈະເຮັດແນວນັ້ນ, ພວກເຂົາໄດ້ນຳເອົາສະພາບເສດຖະກິດສັງຄົມທີ່ເປັນເອກະລັກຂອງທ້ອງຖິ່ນ, ຈຸດພິເສດທາງດ້ານຊີວະວິທະຍາ ຂອງແຫລ່ງນ້ຳໃນແຕ່ລະບ້ານລວມທັງ ຄວາມຫລາກຫລາຍທາງວັດທະນະທຳ, ອົງການຈັດຕັ້ງລັດ ແລະ ອົງການຈັດຕັ້ງອື່ນໆ ກໍ່ໄດ້ນຳມາພິຈາລະນາເຊັ່ນກັນ (Virapat, 2002)[9].

ຢູ່ຫວຽດນາມ, ຫລັກການການດຳລົງຊີວິດໄດ້ຖືກນຳໃຊ້ ເພື່ອອະທິບາຍຈຸດພິເສດຂອງຄວາມທຸກຈົນ, ສະແດງໃຫ້ເຫັນເຖິງການດຳລົງຊີວິດທີ່ຕິດພັນກັບຊັບພະຍາກອນນ້ຳ, ອະທິບາຍສະພາບຂອງທຳມະຊາດ, ເນັ້ນໜັກໃສ່ຂໍ້ຈຳກັດຂອງຄົນທຸກໆຄົນ ທີ່ກ່ຽວພັນເຖິງການສູນເສັຍ ຫລື ການຄຸ້ມຄອງທີ່ບໍ່ມີປະສິດທິຜົນ (Sultana, et al

2003)[10]. ອີກຢ່າງນຶ່ງ, ຮູບແບບຂອງການດຳລົງຊີວິດ ແມ່ນສະແດງໃຫ້ເຫັນຢ່າງຈະແຈ້ງຢູ່ໃນບັນດາໜ້າວຽກຕ່າງໆ ທີ່ໄດ້ສະເໜີຢູ່ໃນແຜນການຈັດຕັ້ງປະຕິບັດ ຂອງກະຊວງປະມົງກ່ຽວກັບການລ້ຽງປາແບບຍືນຍົງເພື່ອລຸດຜ່ອນຄວາມທຸກຈົນ ຂອງລັດຖະບານຫວຽດນາມທີ່ມີຫົວຂໍ້ວ່າ "ລົບລ້າງຄວາມອຶດຫິວ ແລະ ລຸດຜ່ອນຄວາມທຸກຈົນ" (STREAM, 2002)[11].

ຕົວຢ່າງດັ່ງກ່າວ ແມ່ນໄດ້ເອົາມາຈາກການສຶກສາການນຳໃຊ້ຫລັກການການດຳລົງຊີວິດເພື່ອໃຫ້ໄດ້ຂໍ້ມູນທີ່ຊັດເຈນກ່ຽວກັບຄວາມເຂົ້າໃຈເຖິງບົດບາດຂອງແຫລ່ງຊັບພະຍາກອນນ້ຳໂດຍສະເພາະແມ່ນປາຢູ່ໃນການດຳລົງຊີວິດຂອງຊາວຊົນນະບົດ ທີ່ອາໄສຢູ່ໃນອ່າງແມ່ນ້ຳຂອງຕອນລຸ່ມ. ແຕ່ວ່າ, ຫລັກການການດຳລົງຊີວິດແມ່ນບໍ່ມີສະເພາະແຕ່ການວິໄຈການດຳລົງຊີວິດເທົ່ານັ້ນ, ແຕ່ມັນຕ້ອງການໃຫ້ມີຄວາມເຂົ້າໃຈເຖິງຜົນຂອງການວິໄຈນຳອີກ ຊຶ່ງຈະຖືກນຳໃຊ້ເຂົ້າໃນການວາງນະໂຍບາຍ ແລະ ສ້າງແຜນຄຸ້ມຄອງການປະມົງ. ເພື່ອປະຕິບັດວຽກງານດັ່ງກ່າວ ແມ່ນຕ້ອງການໃຫ້ມີການຈັດກຸ່ມລະອຽດກ່ຽວກັບການດຳລົງຊີວິດ, ລັກສະນະພິເສດ ແລະ ໜ້າທີ່ຂອງແຕ່ລະກຸ່ມ.

ຈາກການວິໄຈຫລັກການດຳລົງຊີວິດເພື່ອການພັດທະນາແຜນຍຸດທະສາດການສຶກສາຂອງ Smith *et al* (2005) ຫວ່າງບໍ່ດົນມານີ້ ທີ່ໄດ້ນຳໃຊ້ຫລັກການການດຳລົງຊີວິດ ເພື່ອຊອກຫາກອບຂອງການວິໄຈການປະມົງກ່ຽວກັບຊີວິດການເປັນຢູ່ທີ່ພົວພັນກັບວຽກງານການປະມົງ. ການວິໄຈຂອງເຂົາເຈົ້າແມ່ນອ້າງອີງໃສ່ການທົບທວນ "ຊຶ່ງກົງກັນຂ້າມກັບແນວຄິດສ່ວນນ້ອຍທີ່ວ່າ ຊາວປະມົງແມ່ນເປັນຄົນທຸກໝົດທຸກຄົນ, ການຫາປາແມ່ນອາຊີບລ້າຫລັງ, ຄວາມຈິງແລ້ວ ຊຸມຊົນຫາປາແມ່ນມີຄວາມແຕກຕ່າງກັນໄປໃນແງ່ຂອງຄວາມຮັ່ງມີ, ສັງຄົມ, ວິທີການຫາປາ ແລະ ຊີວິດການເປັນຢູ່ທີ່ອາໄສການຫາປາ" (ໜ້າ 375).
ພວກເຂົາເຈົ້າໄດ້ຮັບຮູ້ວ່າມີ 4 ຫລັກການ ຂອງການດຳລົງຊີວິດ ທີ່ກ່ຽວພັນກັບການປະມົງ:

1. ແມ່ນການດຳລົງຊີວິດແບບປະຖົມປະຖານ ທີ່ບໍ່ທັນສະໄໝ-ຊາວປະມົງ ຫລື ກຸ່ມຊາວປະມົງ ທີ່ຫາປາເພື່ອບໍລິໂພກປະຈຳວັນ.

2. ການດຳລົງຊີວິດທີ່ອາໄສຫລາຍແຫລ່ງຫາກິນ ເພື່ອລ້ຽງຊີວິດ-ຊາວປະມົງ ຫລື ຄອບຄົວຊາວປະມົງທີ່ອາໄສຊອກຫາຊັບພະຍາກອນທຳມະຊາດອື່ນໆ(ຈຳພວກສັດນ້ຳຕ່າງໆ ແລະ ເຄື່ອງປ່າຂອງດົງ) ເພື່ອຫາລ້ຽງຊີບ.

3. ມີອາຊີບໃດນຶ່ງທີ່ແນ່ນອນ - ຊາວປະມົງ ຫລື ຄອບຄົວຊາວປະມົງ ທີ່ອາໄສການຫາປາເປັນອາຊີບເພື່ອຂາຍ ແລະ ສ້າງລາຍຮັບ.

4. ການເຮັດຫລາຍໆໜ້າວຽກລວມກັນ-ຊາວປະມົງ ຫລື ກຸ່ມຄົນທີ່ໄດ້ຮັບຜົນປະໂຫຍດຈາກການຫາປາ ຫລື ໃຫ້ເຊົ່າແຫລ່ງຫາປາ ຊຶ່ງປະກອບມີຫລາຍກິດຈະກຳ ທີ່ໄດ້ນຳໃຊ້ແຫລ່ງທຳມະຊາດອື່ນໆ ຫລື ໄດ້ເຮັດວຽກທີ່ບໍ່ແມ່ນການປະມົງຍົກຕົວຢ່າງ: ການຜະລິດກະສິກຳ.

ການວິໄຈດັ່ງກ່າວ Smith et al ໄດ້ສະແດງໃຫ້ເຫັນເຫດຜົນທີ່ສຳຄັນສຳລັບນັກວາງນະໂຍບາຍ ທີ່ຈະສາມາດໄຈ້ແຍກຄວາມຕ້ອງການໄປໃນຫລາຍທາງ ແລະ ມີວິທີການຄຸ້ມຄອງທີ່ເໝາະສົມເພື່ອ ໃຫ້ສອດຄ່ອງກັບຄວາມຕ້ອງການ ແລະ ສະພາບຕົວຈິງຂອງຊຸມຊົນ, ຮັບປະກັນໃຫ້ຊຸມຊົນທີ່ທຸກຍາກໄດ້ຮັບຜົນປະໂຫຍດ ຈາກການປະມົງນ້ຳຈືດ, ໄປພ້ອມໆກັບວຽກງານອານຸລັກສິ່ງແວດລ້ອມ.

**ການປະມົງທີ່ມີສ່ວນພົວພັນເຖິງຫລັກການດຳລົງຊີວິດ ແມ່ນມີລັກສະນະ ແລະ ໜ້າທີ່ແຕກຕ່າງກັນ**

| ຫລັກການການດຳລົງຊີວິດ | ລັກສະນະຂອງການປະມົງ | ການດຳລົງຊີວິດຕິດພັນກັບການປະມົງ |
|---|---|---|
| • ການຢູ່ລອດ | • ເປີດກ້ວາງ, ມີການຫາປາເກີນຂອບເຂດ | • ເພື່ອບໍລິໂພກ<br>• ຫາປາປະຈຳ ຫລື ຫາເປັນຊ່ວງ<br>• ມີຄວາມສຳຄັນສຳລັບຜູ້ຍິງເດັກນ້ອຍ,ຜູ້ເຖົ້າ ແລະ ຜູ້ບໍ່ແຂງແຮງ. |
| • ການດຳລົງຊີວິດທີ່ອາໄສຫລາຍແຫລ່ງຫາກິນເພື່ອລ້ຽງຊີວິດ | • ເປີດກວ້າງ, ແຕ່ອາດມີການວາງກົດລະບຽບຂຶ້ນເອງ, ອີງຕາມຈຳນວນປະຊາກອນ<br>• ດິນ ແລະ ຊັບພະຍາກອນທຳມະຊາດ ຖືກຄຸກຄາມ | • ຮັບປະກັນສະບຽງອາຫານ<br>• ມີເຂດປ້ອງກັນ, ຫວງຫ້າມ<br>• ສ້າງແຫລ່ງລາຍຮັບ ຫລື ແລກປ່ຽນກັບສິ່ງອື່ນ<br>• ມີຄວາມສຳຄັນຕໍ່ຜູຍິງ ແລະ ເດັກນ້ອຍ |
| • ມີອາຊີບໃດນຶ່ງທີ່ແນ່ນອນ | • ຕ້ອງການໃຫ້ມີກົດລະບຽບ ແລະ ວິທີການຄຸ້ມຄອງທີ່ດີ<br>• ເພື່ອໃຫ້ມີລາຍຮັບທີ່ຍືນຍົງ<br>• ອາດມີການຄຸ້ມຄອງຂອງສ່ວນບຸກຄົນ, ຫລື ສິດນຳໃຊ້ຂອງກຸ່ມບຸກຄົນ | • ມີລາຍຮັບ ແລະ ສ່ວນແຮໄວ້<br>• ສ່ວນຫລາຍແມ່ນຜູ້ຊາຍ |
| • ມີຫລາຍກິດຈະກຳຮ່ວມກັນ | • ເປີດກ້ວາງ ແລະ ມີການວາງລະບຽບກັນເອງ ຢູ່ພາຍໃນບ້ານ ຫລືເຂດແຄ້ວນ | • ມີເຂດຫວງຫ້າມ, ແຕ່ສ່ວນຫລາຍ ແມ່ນບໍ່ມີຄວາມສຳຄັນ<br>• ບໍລິໂພກພາຍໃນ ແລະ ເປັນການພັກຜ່ອນ |

ມັນຮຽກຮ້ອງໃຫ້ມີນະໂຍບາຍຄຸ້ມຄອງການປະມົງທີ່ແຕກຕ່າງກັນ ຫລາຍກວ່າທີ່ມີໃນປະຈຸບັນ ແລະ ການຍອມຮັບເອົາການເຊື່ອມຍົງນະໂຍບາຍທີ່ດີເລີດນັ້ນ ແມ່ນອາດຂຶ້ນກັບສະພາບຂອງແຕ່ລະເຂດ.

*ຕາຕະລາງຂ້າງລຸ່ມ ແມ່ນສະແດງໃຫ້ເຫັນ ຈຸດປະສົງຕົ້ນຕໍຂອງນະໂຍບາຍ ແລະ ເຄື່ອງມືທີ່ Smith et al. (2005) ໄດ້ສະເໜີ ສຳລັບແຕ່ລະຊະນິດຂອງການດຳລົງຊີວິດ.*

| ວິທີການດຳລົງຊີວິດ | ຈຸດປະສົງຕົ້ນຕໍຂອງນະໂຍບາຍ | ນະໂຍບາຍທີ່ນຳໃຊ້ |
|---|---|---|
| • ການຢູ່ລອດ | • ລຸດຜ່ອນຈຳນວນຊາວປະມົງ<br>• ຮັກສາສະພາບແວດລ້ອມ | • ຊອກວຽກອື່ນຢູ່ໃນທ້ອງຖິ່ນໃຫ້ເຮັດ<br>• ມີສະຫວັດດີການສັງຄົມ "ສ່ວນແຮໄວ້"<br>• ເພີ່ມຜົນຜະລິດການປະມົງໃຫ້ມີ "ສ່ວນແຮໄວ້" |
| • ການດຳລົງຊີວິດທີ່ອາໄສຫລາຍແຫລ່ງຫາກິນເພື່ອລ້ຽງຊີວິດ | • ການດຳລົງຊີວິດພື້ນບ້ານແບບຍືນຍົງ<br>• ປົກປັກຮັກສາສະພາບແວດລ້ອມ ແລະ ເພີ່ມຜົນຜະລິດ | • ມີລະບຽບການຄຸ້ມຄອງ<br>• ຮັກສາການເຂົ້າເຖິງຂອງຄົນທຸກຈົນ ໂດຍ ຜ່ານອົງການຈັດຕັ້ງ ແລະ ສ້າງເງື່ອນໄຂເພື່ອໃຫ້ເຂົ້າເຖິງ<br>• ເພີ່ມຜົນຜະລິດການປະມົງ |
| • ມີອາຊີບໃດນຶ່ງທີ່ ແນ່ນອນ | • ການຫາປາເພື່ອຂາຍເປັນສິນຄ້າ ແບບຍືນຍົງ | • ສ້າງຄວາມເຂັ້ມແຂງ ໃຫ້ແກ່ການການຄຸ້ມຄອງປະມົງຂັ້ນບ້ານ<br>• ເພີ່ມຜົນຜະລິດປາ<br>• ນຳໃຊ້ເຄື່ອງມືທີ່ທັນສະໄໝ<br>• ມີລະບົບເງິນກູ້ ແລະ ການຕະຫລາດ<br>• ຜະລິດຕະພັນປຸງແຕ່ງ ແລະ ການຕະຫລາດ<br>• ມີເຂດຫ້າມຫາປາ |
| • ມີຫລາຍກິດຈະກຳຮ່ວມກັນ | • ປົກປັກຮັກສາລະບົບນິເວດວິທະຍາ | • ມີກົດລະບຽບ<br>• ມີສິ່ງກວດກາການປົກປັກຮັກສາລະບົບນິເວດວິທະຍາ. |

## ຂໍ້ສະເໜີແນະ

ຫລັກການການດຳລົງຊີວິດ ແມ່ນສະໜອງວິທີວິໄຈບັນຫາ ເພື່ອສຶກສາ ວິທີການດຳລົງຊີວິດຂອງຊຸມຊົນ ຊຶ່ງສາມາດໃຫ້ຂໍ້ຄວາມຄິດ ສຳລັບຮ່າງ ແລະ ຈັດຕັ້ງປະຕິບັດນະໂຍບາຍ ເພື່ອການພັດທະນາ ແລະ ຄຸ້ມຄອງຊັບພະຍາກອນ ປະມົງຢູ່ແມ່ນ້ຳຂອງໃຫ້ຍືນຍົງ.

1. ຍ້ອນວ່າໄດ້ນຳໃຊ້ ຫລາຍວິທີການ ທີ່ມີວິທະຍາສາດ. ສະນັ້ນ, ຈຶ່ງຄວນຖືກນຳໃຊ້ເພື່ອຮ່າງ ແລະ ຈັດຕັ້ງປະຕິບັດນະໂຍບາຍຄຸ້ມຄອງ ແລະ ຜະລິດ ທີ່ແຕກຕ່າງກັນ ສຳລັບວິທີການດຳລົງຊີວິດທີ່ຢູ່ໃນສະພາບບໍ່ຄືກັນ ທີ່ໄດ້ເຂົ້າຮ່ວມການປະມົງ ຫລື ກິດຈະກຳຕ່າງໆ ທີ່ກ່ຽວຂ້ອງກັບການປະມົງ

2. ແຕ່ວ່າ, ທິດສະດີ ກ່ຽວກັບການດຳລົງຊີວິດ ແມ່ນບໍ່ໄດ້ຖືກພິຈາລະນາ ແລະ ນຳໃຊ້ຈາກນັກວາງແຜນ, ນັກບໍລິຫານ ແລະ ຜູ້ບໍລິຫານທາງດ້ານການປະມົງ. ອາດເປັນຍ້ອນວ່າ ວິທີການ ແລະ ການຈັດຕັ້ງປະຕິບັດຂອງທິດສະດີດັ່ງກ່າວ ແມ່ນບໍ່ໄດ້ເຜີຍແຜ່ອອກສູ່ທາງກວ້າງ ຫລື ຍອມຮັບ. ມັນມີຄວາມຕ້ອງການໃຫ້ມີການສ້າງຕັ້ງ ໂຄງການຝຶກອົບຮົມ ຊຶ່ງຈະໄດ້ຮັບຜົນກ່ອນໝູ່ແມ່ນຜ່ານ ກອງປະຊຸມທີ່ມີສ່ວນຮ່ວມ.

3. ການຄົ້ນຄວ້າກ່ຽວກັບການດຳລົງຊີວິດຕິດພັນກັບການປະມົງ, ໂດຍສະເພາະແມ່ນມີຈຸດປະສົງເພື່ອສະໜອງຂໍ້ມູນພື້ນຖານໃຫ້ແກ່ນັກວາງນະໂຍບາຍ ແລະ ນັກວາງລະບຽບການ ແມ່ນຕ້ອງໄດ້ປະຕິບັດໂດຍນຳໃຊ້ທິດສະດີການດຳລົງຊີວິດ. ອົງການຈັດຕັ້ງຕ່າງໆ ແລະ ຄະນະກຳມະການທີ່ຈະສຶກສາເລື້ອງນີ້ຄວນຈະ ໝູນໃຊ້ທິດສະດີດັ່ງກ່າວໃນການວາງແຜນ, ດຳເນີນການທົດລອງ ແລະ ຂຽນລາຍງານກິດຈະກຳຕ່າງໆ.

## ບົດສັງລວມຊ້ອນທ້າຍ:

1. The STREAM initiative ແມ່ນໄດ້ຮັບຮ່ວມມືກັບຫລາຍພາກສ່ວນ ເປັນຕົ້ນແມ່ນ AusAID, DFID,FAO ແລະ VSO) ແລະ ອຸປະຖຳໂດຍ NACA. ໂຄງການດັ່ງກ່າວໄດ້ພັດທະນາວິທີການເພື່ອເຮັດໃຫ້ພາກສ່ວນກ່ຽວຂ້ອງ ມີການພົວພັນແລກປ່ຽນບົດຮຽນ ໃນການຄຸ້ມຄອງຊັບພະຍາກອນສັດນ້ຳ ແລະ ໃຫ້ການສະໜັບ ສະໜູນ ໃນການອອກແບບ, ຈັດຕັ້ງປະຕິບັດ ແລະ ຄຸ້ມຄອງກວດກາ.
2. ເນື້ອເລື້ອງທັງໝົດຂອງບົດລາຍງານນີ້ ແມ່ນສາມາດ ຫາໄດ້ຢູ່ເວບໃຊ້ຂອງ STREAM ທີ່ www. streaminitiative.org.
3. ມີຫລາຍເອກະສານ ທີ່ພິມເຜີຍແຜ່ກ່ຽວກັບ ທິດສະດີຂອງການດຳລົງຊີວິດ ເປັນຕົ້ນແມ່ນ MRAG, 2006: Fisheries and Livelihoods (FMSP Policy Brief 4)

4. Carney, D. (1998) Sustainable rural livelihoods: What contribution can we make? Implementing the sustainable rural livelihoods approach. Paper presented to the DfID Natural Resource Advisers' conference. London: Department for International Development.
5. Vannaara, T. (2003) Sustainable Livelihoods of Local people in Community fisheries, the Upper Mekong River Cambodia, Stung Treng Province. A Case Study "Au Svay community fisheries", Stung Treng Province. Culture and Environment Preservation Association (CEPA), Phnom Penh, Cambodia. 9 pp.
6. Marschker, M. (2006) Exploring Strategies that Build livelihood Resilience: A Case from Cambodia. 2006 Biannual IASCP Conference, Bali, June 2006.
7. Shoemaker, B., Baird, I and M. Baird (2001) The people and their river- a survey of river-based livelihoods in the Xai Bang Fai Basin in Central Lao PDR. Canada Fund, Vientiane Lao PDR. Vientiane.
8. Mollot, R., Phothitay, C., and S. Kosy (2003) Seasonally Flood Habitat and Non-Timber Forest Products: Supporting Biodiversity and Local Livelihoods in Southern Lao PDR. WWF Lao PDR Program, Living Aquatic Resources Research Centre (LARReC), Livestock and Fishery Section of Savannakhet Province, Lao PDR. 27pp.
9. Virapat, C. (2002) Strategic management approach to the Village Fish Pond Program (VFP) in alleviating rural poverty in Thailand. FAO/NACA-Expert Consultation 'Focusing Small-scale Aquaculture and Aquatic Resource Management on Poverty Alleviation', Bangkok, 12-14 February 2002.
10. Sultana, P., Thompson, P., and M. Ahmed (2003) Understanding Livelihoods Development on Inland Fisheries in Bangladesh and Southeast Asia. Final Technical Report (DfID/FMSP Project R8118).
11. STREAM. (2002) Learning Workshop on Livelihood analysis Report. Long An, Viet Nam, 19-20 November 2002. STREAM, Bangkok.
12. Smith, L.E.D., Nguyen, K.S., and Lorenzen (2005) Livelihood Functions of Inland Fisheries: Policy Implication in Developing Countries. Water Policy 2005 (7), 359-383

## ບົດສະເໜີອື່ນໆ ທີ່ໄດ້ຈັດພິມ

- ວັງນ້ຳເລິກແມ່ນທີ່ຢູ່ອາໄສໃນລະດູແລ້ງ ຂອງປາແມ່ນ້ຳຂອງ
- ຊະນິດປາໃຫຍ່ໃນແມ່ນ້ຳຂອງ: ການຄຸ້ມຄອງ ແລະ ຊີວະວິທະຍາ
- ບົດບາດແມ່ຍິງ ໃນວຽກງານການປະມົງ ຢູ່ອ່າງແມ່ນ້ຳຂອງຕອນລຸ່ມ
- ການເຄື່ອນຍ້າຍຂອງປາໃນອ່າງແມ່ນ້ຳຂອງຕອນລຸ່ມ


**ຈັດພິມໂດຍ ກອງເລຂາຄະນະກຳມະທິການແມ່ນ້ຳຂອງສາກົນ**

**ເພື່ອສົ່ງເສີມ ແລະ ຊຸກຍູ້ວຽກງານ TAB**



ຄະນະກຳມະທິການແມ່ນ້ຳຂອງສາກົນ

ຕູ້ ປນ: 6101, 184 ຖະໜົນຟ້າງຸ່ມ, ໜ່ວຍ 18, ບ້ານສີຖານເໜືອ

ເມືອງ ສີໂຄດຕະບອງ, ນະຄອນຫລວງວຽງຈັນ, ສປປ ລາວ

ໂທລະສັບ: (856 21) 263 263; ແຟກ: (856 21) 263 264

ອີແມວ: mrcs@mrcmekong.org; ແວບໄຊ: www.mrcmekong.org



*ແປ ແລະ ຮຽບຮຽງພາສາລາວໂດຍ: ການວິພອນ ພຸດທະວົງສ໌*

*ເມສາ 2008*